ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ເລກທີ 0488 /ສທ

ນະຄອນຫຼວງວຽງຈັນ, ວັນທີ 20 MAY 2021

# ແຈ້ງການ

**ເຖິງ:** ບັນດາທ່ານຫົວໜ້າພະແນກສາທາລະນະສຸກ 17 ແຂວງ ແລະ ນະຄອນຫຼວງວຽງຈັນ.

**ເລື່ອງ:** ການກຳນົດເຂດການລະບາດ ເພື່ອປ້ອງກັນ ແລະ ຄວບຄຸມການລະບາດ ຂອງພະຍາດ COVID-19.

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດອັກເສບປອດຍ້ອນເຊື້ອຈຸລະໂລກສາຍພັນໃໝ່, ເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020;
- ອີງຕາມ ຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ການເຫັນດີເປັນເອກະພາບ ໃນກອງປະຊຸມ ກອງເລຂາຄະນະສະເພາະກິດ ເພື່ອປ້ອງກັນຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19 ໂດຍການເປັນປະທານຂອງທ່ານ ຮອງຫົວໜ້າກອງເລຂາຄະນະສະເພາະກິດ, ຄັ້ງວັນທີ 19 ພຶດສະພາ 2021 ທີ່ກະຊວງສາທາລະນະສຸກ.

ເພື່ອເຮັດໃຫ້ການວາງມາດຕະການສະກັດກັ້ນ ແລະ ຄວບຄຸມການລະບາດຂອງ ພະຍາດ COVID-19 ໃຫ້ມີຄວາມຮັດກຸມ, ສອດຄ່ອງ ແລະ ແທດເໝາະກັບສະພາບການລະບາດຕົວຈິງຂອງພະຍາດ ໃນແຕ່ລະຂົງເຂດ. ກະຊວງສາທາລະນະສຸກ ຈຶ່ງໄດ້ກຳນົດເອົາບ້ານ ເປັນຫົວໜ່ວຍໃນການແບ່ງເຂດ ການລະບາດຂອງພະຍາດ COVID-19 ອອກເປັນ 03 ເຂດ ຄື: ເຂດແດງ, ເຂດເຫຼືອງ ແລະ ເຂດຂຽວ. ຕາມລາຍລະອຽດ ດັ່ງລຸ່ມນີ້:

## I. ການກຳນົດເຂດການລະບາດ

1. **ເຂດ/ບ້ານສີແດງ:**

   ໝາຍເຖິງ ບ້ານທີ່ມີຜູ້ຕິດເຊື້ອ 1 ກໍລະນີ ທີ່ບໍ່ຮູ້ແຫຼ່ງທີ່ມາຂອງການຕິດເຊື້ອ ຫຼື ການເກີດເປັນຈຸ້ມ ທີ່ມີ 2 ກໍລະນີຂຶ້ນໄປ ໃນໄລຍະ 14 ວັນຜ່ານມາ.

2. **ເຂດ/ບ້ານສີເຫຼືອງ:**

   ໝາຍເຖິງ ບ້ານທີ່ມີຜູ້ຕິດເຊື້ອ 1 ກໍລະນີ ທີ່ຮູ້ແຫຼ່ງທີ່ມາຂອງການຕິດເຊື້ອ ໃນໄລຍະ 14 ວັນຜ່ານມາ ແລະ/ຫຼື ເປັນ ບ້ານທີ່ມີຊາຍແດນຕິດກັບເຂດບ້ານສີແດງ ຫຼື ເປັນບ້ານທີ່ມີລາຍງານຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອ.

3. **ເຂດ/ບ້ານສີຂຽວ:**

   ໝາຍເຖິງ ບ້ານທີ່ບໍ່ມີກໍລະນີຕິດເຊື້ອ ແລະ ບໍ່ມີຜູ້ສຳຜັດໃກ້ຊິດ ໃນໄລຍະ 14 ວັນຜ່ານມາ.

## II. ມາດຕະການໃນການຈັດຕັ້ງປະຕິບັດ

1. **ເຂດ/ບ້ານສີແດງ:**

   - ສືບຕໍ່ປະຕິບັດຄຳສັ່ງ ສະບັບເລກທີ 15/ນຍ ລົງວັນທີ 21 ເມສາ 2021.
   - ປິດຮ້ານເສີມສວຍ, ຮ້ານຕັດຜົມ, ສະຖານທີ່ທ່ອງທ່ຽວ, ສວນອາຫານ, ກາຊິໂນ ແລະ ຮ້ານເກມ ທຸກປະເພດ.

- ໃຫ້ປິດບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ, ຍົກເວັ້ນ ໂຮງງານທີ່ມີທີ່ພັກຂອງແຮງງານຢູ່ໃນບໍລິເວນໂຮງງານຂອງຕົນ, ໂຮງງານຜະລິດສິນຄ້າບໍລິໂພກ, , ຢາປົວພະຍາດ, ເຄື່ອງປ້ອງກັນການລະບາດ ແລະ ອຸປະກອນການແພດ ແຕ່ໃຫ້ມີການຄຸ້ມຄອງຕາມມາດຕະການປ້ອງກັນ ຂອງຄະນະສະເພາະກິດ ວາງອອກ ຢ່າງເຂັ້ມງວດ. ໃນໄລຍະພັກວຽກນີ້, ໃຫ້ຜູ້ປະກອບການ ຂອງບັນດາໂຮງງານທີ່ປິດ ມີການຄຸ້ມຄອງແຮງງານໃຫ້ພັກຢູ່ທີ່ພັກຂອງຕົນ ແລະ ປະຕິບັດນະໂຍບາຍສະຫວັດດີການ ໃຫ້ແກ່ແຮງງານເຫຼົ່ານັ້ນ.
- ອະນຸຍາດໃຫ້ເປີດ ຫ້ອງການບ້ານ, ປກສ ກຸ່ມບ້ານ, ສຸກສາລາ ແລະ ຮ້ານຂາຍຢາ ແຕ່ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ຢ່າງເຂັ້ມງວດ.
- ຫ້າມບຸກຄົນອອກຈາກບໍລິເວນເຮືອນ ຍົກເວັ້ນ ຜູ້ທີ່ໄດ້ຮັບອະນຸຍາດຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຍ້ອນເຫດຜົນຈຳເປັນເຊັ່ນ: ຂົນສົ່ງສິນຄ້າ ແລະ ສົ່ງອາຫານ, ໄປໂຮງໝໍ, ໄປຮັບວັກຊີນ ແຕ່ໃຫ້ຂະແໜງສາທາລະນະສຸກ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ຕັ້ງດ່ານກວດສຸຂະພາບ, ກວດກາເອກະສານ ແລະ ເກັບກຳຂໍ້ມູນ ຢ່າງເຂັ້ມງວດ.
- ສຳນັກງານຫ້ອງການທີ່ມີຄວາມຈຳເປັນຕ້ອງມີການເຮັດວຽກຕໍ່ເນື່ອງ ຕ້ອງ ແຕ່ງຕັ້ງພະນັກງານມາປະຈຳການ 14 ວັນ ໂດຍ ບໍ່ມີການຜັດປ່ຽນຜູ້ໃໝ່.
- ຫ້າມຈັດປະຊຸມ, ໂຮມຊຸມນຸມ ຫຼື ກິດຈະກຳຕ່າງໆ , ກໍລະນີຈຳເປັນຕ້ອງ ຈັດກິດຈະກຳໃດໜຶ່ງ ຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ຕ້ອງປະຕິບັດຕາມມາດຕະການ ຂອງຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ ເປັນຕົ້ນ ແທກອຸນຫະພູມ,  ການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອ.
- ຫ້າມນັ່ງກິນ-ດື່ມ ຢູ່ໃນຮ້ານອາຫານ ຫຼື ຮ້ານກາເຟ, ໃຫ້ເປີດສະເພາະສັ່ງກັບເຮືອນເທົ່ານັ້ນ ຫຼື ມີບໍລິການສົ່ງເຖິງສະຖານທີ່ ໃນເຂດທີ່ມີການລະບາດ.
- ໃຫ້ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດບັນດາມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢູ່ບັນດາຮ້ານຂາຍເຄື່ອງຍ່ອຍ, ມີນີມາດ, ຊຸບເປີມາເກັດ ແລະ ຕະຫຼາດ ເປັນຕົ້ນ ແທກອຸນຫະພູມ,  ຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື.
- ອະນຸຍາດໃຫ້ ລົດໂຮງໝໍ, ທີມແພດ, ຄະນະສະເພາະກິດ, ລົດດັບເພີງ ແລະ ລົດເກັບມ້ຽນຂີ້ເຫຍື້ອ ເຂົ້າໄປປະຕິບັດໜ້າທີ່.
- ຈັດໃຫ້ມີເວນຍາມ ແລະ ລາດຕະເວນ 24 ຊົ່ວໂມງ ເພື່ອສະກັດກັ້ນ ການລັກເຂົ້າ-ອອກ ບ້ານ ໂດຍບໍ່ໄດ້ຮັບອະນຸຍາດ.
- ອະນາໄມຂ້າເຊື້ອຢູ່ເຮືອນ ແລະ ສະຖານທີ່ ທີ່ຜູ້ຕິດເຊື້ອໄດ້ເດີນທາງໄປ. ເປັນຕົ້ນ ການຂ້າເຊື້ອຢູ່ໃນເຮືອນ, ເປີດປະຕູປ່ອງຢ້ຽມ, ອະນາໄມຕາມລູກບິດປະຕູ, ຮາວຂັ້ນໄດດ້ວຍເຫຼົ້າ 70 ອົງສາ.
- ການຈຳກັດຂີ້ເຫຍື້ອຕ້ອງໃສ່ຖົງຢາງ 2 ຊັ້ນ ແລະ ສີດພົ່ນດ້ວຍເຫຼົ້າ 90 ອົງສາ.
- ມາດຕະການອື່ນໆ ທີ່ເຫັນວ່າມຈຳເປັນໃນການສະກັດກັ້ນ ແລະ ຄວບຄຸມການລະບາດຂອງພະຍາດ.
- ຖ້າບໍ່ມີກໍລະນີພົບເຊື້ອໃໝ່ ຫຼັງຈາກ 14 ວັນ ຈະໄດ້ມີການປະເມີນອອກຈາກເຂດແດງ.

2. **ເຂດ/ບ້ານສີເຫຼືອງ:**
   - ສືບຕໍ່ປະຕິບັດຄຳສັ່ງ ສະບັບເລກທີ 15/ນຍ ລົງວັນທີ 21 ເມສາ 2021.

- ສາມາດເດີນທາງໄປເຂດສີເຫຼືອງ ໄດ້ພ້ອມທັງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ຢ່າງເຄັ່ງຄັດ.
- ຮ້ານອາຫານ ແລະ ຄາເຟ້ ໃຫ້ບໍລິການ ໃນຮູບແບບຊື້ກັບເຮືອນ
- ສໍານັກງານ ຫ້ອງການ ໃຫ້ເຮັດວຽກທາງ ອອນລາຍ ແຕ່ຖ້າມີຄວາມຈໍາເປັນ ມາເຮັດວຽກຢູ່ຫ້ອງການ ແມ່ນໃຫ້ຜັດປ່ຽນກັນມາປະຈໍາການເພື່ອບໍ່ໃຫ້ມີ ຈໍານວນພົນແອອັດ.
- ຫ້າມບໍ່ໃຫ້ໂຮມຊຸມນຸມເກີນ 05 ຄົນ, ກໍລະນີຈໍາເປັນຕ້ອງ ຈັດກິດຈະກໍາໃດໜຶ່ງ ຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ຕ້ອງປະຕິບັດຕາມມາດຕະການ ຂອງຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ ເປັນຕົ້ນ ແທກອຸນຫະພູມ, ການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືໃສ່ສະບູ ຫຼື ນໍ້າຢາຂ້າເຊື້ອ.
- ບໍ່ມີການເວນຍາມ ແລະ ແລະ ລາດຕະເວນ ການເຂົ້າ-ອອກ ຕາມຊາຍແດນລະຫ່ວາງບ້ານເຫຼືອງ ແລະບ້ານຂຽວ.
- ໃຫ້ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດບັນດາມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢູ່ບັນດາຮ້ານຂາຍເຄື່ອງຍ່ອຍ, ມິນິມາດ, ຊຸບເປີມາເກັດ ແລະ ຕະຫຼາດ ເປັນຕົ້ນ ແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນໍ້າສະອາດ ໃສ່ສະບູ ຫຼື ເຈລລ້າງມື.
- ມາດຕະການອື່ນໆ ທີ່ເຫັນວ່າຈໍາເປັນໃນການສະກັດກັ້ນ ແລະ ຄວບຄຸມການລະບາດຂອງພະຍາດ.

3. **ເຂດ/ບ້ານສີຂຽວ:**

- ສືບຕໍ່ປະຕິບັດຄໍາສັ່ງ ສະບັບເລກທີ 15/ນຍ ລົງວັນທີ 21 ເມສາ 2021.
- ສາມາດເດີນທາງໄປເຂດສີຂຽວໄດ້ ພ້ອມທັງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ຢ່າງເຄັ່ງຄັດ.
- ຮ້ານອາຫານ ແລະ ຄາເຟ້ ໃຫ້ບໍລິການ ໃນຮູບແບບຊື້ກັບເຮືອນ.
- ຫ້າມບໍ່ໃຫ້ໂຮມຊຸມນຸມເກີນ 10 ຄົນ, ກໍລະນີຈໍາເປັນຕ້ອງ ຈັດກິດຈະກໍາໃດໜຶ່ງ ຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ຕ້ອງປະຕິບັດຕາມມາດຕະການ ຂອງຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ ເປັນຕົ້ນ ແທກອຸນຫະພູມ, ການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືໃສ່ສະບູ ຫຼື ນໍ້າຢາຂ້າເຊື້ອ.
- ໃຫ້ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດບັນດາມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢູ່ບັນດາຮ້ານຂາຍເຄື່ອງຍ່ອຍ, ມິນິມາດ, ຊຸບເປີມາເກັດ ແລະ ຕະຫຼາດ ເປັນຕົ້ນ ແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນໍ້າສະອາດ ໃສ່ສະບູ ຫຼື ເຈລລ້າງມື.
- ມາດຕະການອື່ນໆ ທີ່ເຫັນວ່າຈໍາເປັນໃນການສະກັດກັ້ນ ແລະ ຄວບຄຸມການລະບາດຂອງ ພະຍາດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ຕາມແຈ້ງການນີ້ ຢ່າງເຂັ້ມງວດ.

**ລັດຖະມົນຕີ**

ກະຊວງ ສາທາລະນະສຸກ

ລັດຖະມົນຕີ

ປອ.ດຣ. ບຸນແຝງ ພູມມະໄລສິດ